ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********** 000 ***********

ກະຊວງການເງິນ

3431----

ເລກທີ________/ກງ.

ນະຄອນຫຼວງວຽງຈັນ, ວັນທີ 10 OCT 2016

# ແຈ້ງການ

**ເຖິງ :** ກົມພາສີ.

**ເລື່ອງ :** ໃຫ້ໂຈະການອະນຸຍາດນຳເຂົ້າສົ່ງອອກຕໍ່ ສຳລັບສິນຄ້າປະເພດພາຫະນະ, ນ້ຳມັນເຊື້ອໄຟ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງຂອງລັດຖະມົນຕີສະບັບເລກທີ 0462/ກງ, ລົງວັນທີ 14 ມີນາ 2003.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 0462/ກງ, ລົງວັນທີ 14 ມີນາ 2003 ວ່າດ້ວຍການເກັບຄ່າທຳນຽມເດີດຖານ ສຳລັບບາງສິນຄ້າ, ເຄື່ອງຂອງ ນຳເຂົ້າເພື່ອສົ່ງອອກຕໍ່.

ຜ່ານມາ ການຈັດຕັ້ງປະຕິບັດຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 0462/ກງ, ລົງວັນທີ 14 ມີນາ 2003 ວ່າດ້ວຍການເກັບຄ່າທຳນຽມເດີດຖານ ສຳລັບບາງສິນຄ້າ, ເຄື່ອງຂອງ ນຳເຂົ້າເພື່ອສົ່ງອອກຕໍ່ ໄດ້ສ້າງທ່າແຮງໃນການຈັດເກັບລາຍຮັບເຂົ້າງົບປະມານຈຳນວນໜຶ່ງໃຫ້ແກ່ຂະແໜງພາສີ, ໄປຄຽງຄູ່ກັນນັ້ນ,ໃນໄລຍະປະຈຸບັນເຫັນໄດ້ວ່າການຄຸ້ມຄອງການນຳເຂົ້າສິນຄ້າ, ເຄື່ອງຂອງເພື່ອສົ່ງອອກຕໍ່ ບາງປະເພດສິນຄ້າກົນໄກການຄຸ້ມຄອງ ຍັງບໍ່ມີຄວາມຮັດກຸມເທົ່າທີ່ຄວນ ເປັນຕົ້ນສິນຄ້າປະເພດ; ນ້ຳມັນເຊື້ອໄຟ, ພາຫະນະ.

## ລັດຖະມົນຕີກະຊວງການເງິນ ອອກແຈ້ງການ:

1. ໃຫ້ກົມພາສີ ໂຈະການອະນຸຍາດນຳເຂົ້າສົ່ງອອກຕໍ່ ສຳລັບສິນຄ້າປະເພດ; ນ້ຳມັນເຊື້ອໄຟ ແລະ ພາຫະນະ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 0462/ກງ, ລົງວັນທີ 14 ມີນາ 2003 ຈົນກ່ວາຈະມີການປັບປຸງລະບຽບການດັ່ງກ່າວໃຫ້ສຳເລັດ.

2. ສິນຄ້າປະເພດອື່ນ ນອກຈາກສິນຄ້າປະເພດ; ນ້ຳມັນເຊື້ອໄຟ , ພາຫະນະ ແມ່ນໃຫ້ກົມພາສີສືບຕໍ່ຈັດຕັ້ງປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 0462/ກງ, ລົງວັນທີ 14 ມີນາ 2003.

3. ໃຫ້ກົມພາສີ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ເອົາໃຈໃສ່ຈັດຕັ້ງຄຸ້ມຄອງ ຕິດຕາມກວດກາສິນຄ້າ, ເຄື່ອງຂອງນຳເຂົ້າສົ່ງອອກຕໍ່ ໃຫ້ເຂັ້ມງວດຮັດກຸມ ແນ່ໃສ່ເພື່ອກຳຈັດສ່ອງຫວ່າງ ບໍ່ໃຫ້ມີການຫຼົບຫຼີກ, ເຊື່ອງອຳ ແລະ ຈຳໜ່າຍຢູ່ພາຍໃນປະເທດ.

ດັ່ງນັ້ນ; ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ

<u>ບ່ອນສົ່ງ</u>:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ.
- ກະຊວງອຸດສາຫະກຳ ແລະ ການຄ້າ 01 ສບັບ.
- ເກັບມ້ຽນສຳເນົາ 01 ສະບັບ.